

▶ ທ້າວຄໍາດີອາຍຸ 35 ປີ ແລະ ເຮັດວຽກຢູ່ບໍລິສັດເອກະຊົນແຫ່ງໜຶ່ງ. ລາວມີລູກສາວອາຍຸ 6 ປີທີ່ກໍາລັງຈະເຂົ້າຮຽນຊັ້ນປະຖົມໃນເດືອນໜ້ານີ້. ທ້າວຄໍາດີມີຄວາມຝັນທີ່ຢາກຈະເຫັນລູກສາວໄດ້ຮຽນສູງໆ, ສະນັ້ນ, ລາວໄດ້ຕັດສິນໃຈຊື້ຜະລິດຕະພັນ ພຣຸ ອິດູສມາດ ທີ່ມີຄຸນລັກສະນະດັ່ງນີ້: ວົງເງິນປະກັນໄພແມ່ນ 100,000,000 ກີບ ກັບກໍານົດເວລາຂອງສັນຍາແມ່ນ 15 ປີ. ຄ່າທໍານຽມທີ່ຕ້ອງຈ່າຍແມ່ນ 13,857,500 ກີບຕໍ່ປີ.

ບັນດາຜົນປະໂຫຍດຕ່າງໆ:

1. ຜົນປະໂຫຍດທາງດ້ານການຄຸ້ມຄອງສໍາລັບລູກສາວຂອງທ້າວຄໍາດີແມ່ນໃນກໍລະນີທີ່ເກີດເຫດຄຸ້ມຄອງ*ກັບທ້າວຄໍາດີໃນປີທີ 3, ລູກສາວຂອງທ້າວຄໍາດີຈະໄດ້ຮັບຜົນປະໂຫຍດດັ່ງນີ້:
   a. ວົງເງິນປະກັນໄພ ຈໍານວນ 100,000,000ກີບ ຈະຖືກຈ່າຍໃນກໍລະນີທີ່ບໍ່ມີອຸປະຕິເຫດ ຫຼື 200,000,000ກີບ ໃນກໍລະນີມີເຫດການອຸປະຕິເຫດ.
   b. ການຊົດເຊີຍລາຍປີເທົ່າກັບ 30% ຂອງວົງເງິນປະກັນໄພ
   (30% × 100,000,000ກີບ = 30,000,000ກີບ) ຈາກປີທີ 4 ຈົນເຖິງປີທີ 14 ເຊິ່ງລວມເປັນ 330,000,000 ກີບ.
   c. ຜົນປະໂຫຍດເມື່ອຄົບສັນຍາແມ່ນເທົ່າກັບ 230% ຂອງວົງເງິນປະກັນໄພໃນວັນສັນຍາຄົບອາຍຸຈະຖືກຈ່າຍ
   (230%x100,000,000ກີບ = 230,000,000ກີບ)
   d. ຄ່າທໍານຽມປະກັນໄພທີ່ຍັງເຫຼືອຈໍານວນ 166,290,000ກີບ
   (12ປີ x 13,857,500ກີບ) ຈະຖືກຍົກເວັ້ນ.
   e. ຜົນປະໂຫຍດທີ່ລູກຂອງທ້າວຄໍາດີຈະໄດ້ຮັບທັງໝົດແມ່ນ 660,000,000ກີບ ໃນກໍລະນີທີ່ບໍ່ມີອຸປະຕິເຫດ ແລະ 760,000,000ກີບ ໃນກໍລະນີທີ່ມີອຸປະຕິເຫດ.

2. ຜົນປະໂຫຍດທາງດ້ານການສະສົມ ສໍາຫຼັບທ້າວຄໍາດີໃນວັນຄົບກໍານົດມີດັ່ງນີ້:
   a. ທ້າວຄໍາດີຈະໄດ້ຮັບເງິນ ເມື່ອຄົບກໍານົດສັນຍາ ຂອງ 230% ຫຼື ເທົ່າກັບ 230,000,000ກີບ ຂອງວົງເງິນປະກັນໄພໃນມື້ຄົບກໍານົດສັນຍາ ທີ່ທ້າວບຸນມີສາມາດສະສົມໄວ້ໃຊ້ສໍາລັບທຶນການສຶກສາຂອງລູກລາວ.

**ຄ່າທໍານຽມທີ່ທ້າວຄໍາດີຕ້ອງຈ່າຍ**

| ທາງເລືອກໃນການຈ່າຍຄ່າທໍານຽມ | ລາຍເດືອນ | ລາຍເຄິ່ງປີ | ລາຍປີ |
|---|---|---|---|
| ຄ່າທໍານຽມຈ່າຍໂອນເງິນອັດຕະໂນມັດ *** | 1,428,500ກີບ | 7,500,000ກີບ | 19,600,000ກີບ |
| ສ່ວນຫຼຸດ 3% ສໍາລັບວົງເງິນປະກັນໄພສູງ | 1,385,500ກີບ | 7,275,000ກີບ | 13,857,000ກີບ |

**ແບບແຜນ ແລະ ຕາຕະລາງຜົນປະໂຫຍດ: ຜົນປະໂຫຍດສໍາລັບສັນຍາ 15 ປີ, ກໍລະນີເສຍຊີວິດໃນປີທີ 3.**

| ປີ | ຄ່າທໍານຽມ | ເສຍຊີວິດ ຫຼື ເສຍອົງຄະແບບຖາວອນໃນປີທີ 3 | | | |
|---|---|---|---|---|---|
| | | ຜົນປະໂຫຍດ | | | |
| | | 1. ວົງເງິນປະກັນໄພ | | 2. ເງິນຊົດເຊີຍລາຍປີ | 3.ເງິນຊົດເຊີຍເມື່ອຄົບອາຍຸສັນຍາ |
| | | 1.1 ບໍ່ມີອຸປະຕິເຫດ | 1.2 ອຸປະຕິເຫດ | 30% ຂອງວົງເງິນປະກັນໄພ (1.1) | 230% ຂອງວົງເງິນປະກັນໄພ (1.1) |
| | | 100% | 200% | | |
| 1 | 13,857,000ກີບ | | | | |
| 2 | 13,857,000ກີບ | | | | |
| 3 | 13,857,000ກີບ | 100,000,000ກີບ | 200,000,000ກີບ | | |
| 4 | | | | 30,000,000ກີບ | |
| 5 | | | | 30,000,000ກີບ | |
| 6 | | | | 30,000,000ກີບ | |
| 7 | | | | 30,000,000ກີບ | |
| 8 | | | | 30,000,000ກີບ | |
| 9 | | | | 30,000,000ກີບ | |
| 10 | | | | 30,000,000ກີບ | |
| 11 | | | | 30,000,000ກີບ | |
| 12 | | | | 30,000,000ກີບ | |
| 13 | | | | 30,000,000ກີບ | |
| 14 | | | | 30,000,000ກີບ | |
| 15 | | | | | 230,000,000ກີບ |
| ລວມທັງໝົດ | 41,572,500ກີບ | 100,000,000ກີບ | 200,000,000ກີບ | 330,000,000ກີບ | 230,000,000ກີບ |

| ຜົນປະໂຫຍດ | ເສຍຊີວິດ ຫຼື ເສຍອົງຄະແບບຖາວອນ | |
|---|---|---|
| | ບໍ່ເກີດຈາກອຸປະຕິເຫດ | ຈາກອຸປະຕິເຫດ |
| ລວມທັງໝົດ | 660,000,000ກີບ | 760,000,000ກີບ |

**ໝາຍເຫດ:**

*ຄ່າທໍານຽມປະກັນໄພ ແມ່ນສໍາລັບກໍລະນີເສຍຊີວິດໃນເກນມາດຕະຖານ. ຄ່າທໍານຽມປະກັນໄພເພີ່ມເຕີມ ອາດຈະຖືກເກັບຕື່ມສໍາລັບສະເພາະກໍລະນີທີ່ມີເງື່ອນໄຂທາງການແພດອີງຕາມການພິຈາລະນາຮັບປະກັນໄພ^ ສໍາລັບຜູ້ສະເໜີຂໍເອົາການປະກັນໄພຊີວິດ. ນອກຈາກນີ້, ການສັ່ງຈ່າຍໂອນເງິນອັດຕະໂນມັດແມ່ນມີສໍາລັບການຈ່າຍຄ່າທໍານຽມແບບລາຍເດືອນເທົ່ານັ້ນ***.*

**** ການສັ່ງຈ່າຍໂອນເງິນອັດຕະໂນມັດ ແມ່ນການຈ່າຍໂອນເງິນຜ່ານທະນາຄານໂດຍກົງ.*

*^ ການພິຈາລະນາເອົາປະກັນໄພແມ່ນຂະບວນການປະເມີນຄວາມສ່ຽງໂດຍຜູ້ເອົາປະກັນໄພກ່ອນໜ້າການອອກສັນຍາປະກັນໄພ.*

**21 ວັນ ໄລຍະລູກຄ້າພິຈາລະນາສັນຍາ** *ຜູ້ເອົາປະກັນໄພມີສິດຍົກເລີກ ຫຼື ພິຈາລະນາສັນຍາປະກັນໄພພາຍໃນ 21 ວັນຫຼັງຈາກບໍລິສັດ ພຣູເດັນໂຊລ໌ ປະກັນໄພຊີວິດ (ລາວ) ຈໍາກັດ ໄດ້ອອກສັນຍາປະກັນໄພໃຫ້ທ່ານ. ໃນການຍົກເລີກສັນຍາ ບໍລິສັດ ພຣູເດັນໂຊລປະກັນໄພຊີວິດ (ລາວ) ຈໍາກັດ ຈະສົ່ງເງິນຄ່າທໍານຽມປະກັນໄພທີ່ໄດ້ຮັບຄືນໃຫ້ລູກຄ້າພ້ອມທັງຫັກຄ່າກວດສຸຂະພາບ ແລະ ຄ່າໃຊ້ຈ່າຍອື່ນໆທີ່ຍັງຄ້າງ, (ຖ້າມີ).*

LP3 V2

PRUDENTIAL

ພຣູເດັນໂຊລ໌ ປະກັນໄພຊີວິດ

ຮັບຟັງ ແລະ ເຂົ້າໃຈທ່ານສະເໝີ

ທີ່ຢູ່:
ຊັ້ນ 6, ອາຄານຫ້ອງການຂອງໂຮງແຮມວຽງຈັນພລາຊ່າ, ຖະໜົນ ສາຍລົມ,
ບ້ານ ຫັດສະດີເໜືອ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສອບຖາມຂໍ້ມູນເພີ່ມເຕີມ:
ໂທ: (+856) 21 211 123, ອີເມລ: info@prudential.la
ເວັບໄຊທ໌: www.prudential.la  prudentiallaos

ທ່ານສາມາດເຂົ້າມາສອບຖາມຂໍ້ມູນທີ່ສູນບໍລິການລູກຄ້າຂອງບໍລິສັດພວກເຮົາ ຫຼື ຜ່ານທະນາຄານເອຊີລີດາ (ACLEDA Bank) ສາຂາໃກ້ບ້ານທ່ານ (ສໍາລັບບັນດາສາຂາຂອງທະນາຄານເອຊີລີດາ ເຊິ່ງສະໜອງການບໍລິການຂອງ ພວກເຮົາ ກະລຸນາຕິດຕໍ່ຕາມທີ່ຢູ່ຂ້າງເທິງ).

ຄໍາປະຕິເສດ: ຂໍ້ມູນໃນແຜ່ນພັບນີ້ແມ່ນເພື່ອຈຸດປະສົງທາງດ້ານການຄ້າເທົ່ານັ້ນ. ສໍາລັບລາຍລະອຽດຕ່າງໆ, ກະລຸນາປຶກສາກັບຜູ້ຊ່ຽວຊານດ້ານການປະກັນໄພຊີວິດ ຫຼື ສອບຖາມທີ່ສູນບໍລິການລູກຄ້າຂອງພວກເຮົາ.

## ພຣູ ອິດູສມາດ

ພວກເຮົາຮູ້ວ່າທ່ານຮັກຄອບຄົວຂອງທ່ານໂດຍສະເພາະແມ່ນລູກຂອງທ່ານ ແລະ ທຸກໆມື້ກໍ່ໄດ້ເຕີບໂຕກ້າວເປັນຜູ້ໃຫຍ່. ໃນຖານະພໍ່ແມ່, ທ່ານເອງກໍມີຄວາມຝັນທີ່ຢາກເປັນພະຍານໃນມື້ທີ່ລູກຂອງທ່ານຈົບການສຶກສາໃນອະນາຄົດ ແລະ ທ່ານກໍ່ຕ້ອງຮັບປະກັນວ່າ ແຜນອະນາຄົດທີ່ທ່ານວາງໄວ້ສໍາລັບລູກ ແລະ ຄອບຄົວຂອງທ່ານນັ້ນຈະສາມາດເປັນຈິງໄດ້ທຸກສະຖານະການ.

## ພຣູ ອິດູສມາດ ສາມາດຊ່ວຍທ່ານໄດ້. ເປັນຫຍັງຕ້ອງ ພຣູ ອິດູສມາດ?

ພຣູ ອິດູສມາດ ແມ່ນແຜນປະກັນໄພຊີວິດທີ່ມີການຄຸ້ມຄອງການສຶກສາຂອງລູກທ່ານພ້ອມກັບເປັນການສະສົມທຶນ, ເພື່ອໃຫ້ທ່ານສາມາດສະສົມທຶນໃຫ້ບັນລຸເປົ້າໝາຍຂອງທ່ານ. ສິ່ງທີ່ເຮັດໃຫ້ ພຣູ ອິດູສມາດ ມີຄວາມພິເສດຄື: ໃນກໍລະນີທີ່ມີການເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນໃນຊ່ວງເວລາຂອງສັນຍາການປະກັນໄພ, 100% ຂອງວົງເງິນປະກັນໄພ ຈະຖືກຈ່າຍ, ພ້ອມດ້ວຍເງິນຊົດເຊີຍລາຍປີຈົນເຖິງ 1ປີ ກ່ອນວັນທີ່ສັນຍາປະກັນໄພຄົບອາຍຸ ເພື່ອຮັບປະກັນການສະໜອງທຶນດ້ານການສຶກສາຂອງລູກທ່ານ. ນອກຈາກນີ້, ສັນຍາຍັງໄດ້ສືບຕໍ່ໂດຍທີ່ບໍ່ຕ້ອງຈ່າຍຄ່າທໍານຽມປະກັນໄພທີ່ເຫຼືອ ແລະ ຜົນປະໂຫຍດເມື່ອຄົບອາຍຸສັນຍາຍັງຈະຖືກຈ່າຍໃຫ້ຜູ້ໄດ້ຮັບຜົນປະໂຫຍດ.

ບໍລິສັດ ພຣູເດັນໂຊລ໌ ປະກັນໄພຊີວິດ ລາວ ຈໍາກັດ ມີຄວາມຊໍານານໃນການໃຫ້ຄໍາປຶກສາດ້ານການເງິນທີ່ຈະຊ່ວຍທ່ານໃນການຕັດສິນໃຈກ່ຽວກັບການວາງແຜນການເງິນໃຫ້ ເໝາະສົມກັບຄວາມຕ້ອງການດ້ານການເງິນຂອງຄອບຄົວທ່ານ.

### ຜົນປະໂຫຍດທີ່ທ່ານຈະໄດ້ຮັບ:

1. ຜົນປະໂຫຍດເມື່ອຢູ່ຄົບສັນຍາ. ໃນເມື່ອສັນຍາຄົບອາຍຸສໍາລັບສັນຍາທີ່ມີໄລຍະເວລາ 8ປີ, 10ປີ, 12ປີ, ແລະ 15ປີ ແມ່ນ 205%, 205%, 210%, ແລະ 230% ຂອງວົງເງິນປະກັນໄພ**ທັງໝົດ.
2. ໃນກໍລະນີຂອງການເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ, 100% ຂອງວົງເງິນປະກັນໄພ ຈະຖືກຈ່າຍທັນທີ. ນອກຈາກນີ້, ເງິນຊົດເຊີຍລາຍປີ (ຈະເທົ່າກັບ 30% ຂອງວົງເງິນປະກັນໄພພາຍໃຕ້ເງື່ອນໄຂຂອງສັນຍາ) ຈະຖືກຈ່າຍໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດເລີ່ມຕັ້ງແຕ່ວັນຄົບຮອບປີຂອງການເສຍຊີວິດຂອງຜູ້ໄດ້ຮັບປະກັນໄພ ແລະ ຈະສິ້ນສຸດລົງໜຶ່ງປີກ່ອນວັນຄົບອາຍຸຂອງສັນຍາ. ນອກຈາກນີ້, ຜົນປະໂຫຍດເມື່ອຄົບອາຍຸຈະຖືກຈ່າຍໃຫ້ຜູ້ຮັບຜົນປະໂຫຍດເມື່ອສັນຍາຄົບອາຍຸ.
3. ຄ່າທໍານຽມປະກັນໄພ#ແມ່ນກໍານົດຄົງທີ່ ແລະ ຈະບໍ່ມີການປ່ຽນແປງໃນໄລຍະກໍານົດເວລາຂອງສັນຍາ, ຍົກເວັ້ນສໍາລັບເງື່ອນໄຂພິເສດບາງຢ່າງ.
4. ວົງເງິນປະກັນໄພຈໍານວນຫຼາຍຈະໄດ້ຮັບສ່ວນຫຼຸດ 3% ຂອງຄ່າທໍານຽມທີ່ຕ້ອງຈ່າຍທັງໝົດ ຖ້າຫາກວ່າວົງເງິນປະກັນໄພ** ແມ່ນຫຼາຍກວ່າ ຫຼື ເທົ່າກັບ 70,000,000ກີບ.
5. ການຈ່າຍຄ່າທໍານຽມປະກັນໄພຊີວິດຂອງລູກຄ້າຈະຖືວ່າສິ້ນສຸດລົງ, ໃນກໍລະນີທີ່ຜົນປະໂຫຍດຂອງການປະກັນໄພໄດ້ຖືກຈ່າຍ ເນື່ອງມາຈາກການເກີດຂຶ້ນຂອງເຫດການທີ່ຖືກຄຸ້ມຄອງ*.
6. ລູກຄ້າສາມາດເລືອກຮູບແບບໃນການຈ່າຍຄ່າທໍານຽມປະກັນໄພຊີວິດໄດ້ ແບບຊໍາລະເປັນເດືອນ, ເປັນເຄິ່ງປີ ຫຼື ເປັນປີ.
7. ອາຍຸຂອງລູກຄ້າສໍາລັບກໍານົດເວລາຂອງສັນຍາທັງ 3 ແບບທີ່ແຕກຕ່າງກັນມີດັ່ງນີ້:

| ອາຍຸຂອງສັນຍາ | ກໍານົດ ເວລາຂອງ ຄ່າທໍານຽມປະກັນໄພ | ກໍານົດ ເວລາຂອງ ຜົນປະໂຫຍດ | ອາຍຸນັບຕາມ ວັນເດືອນປີເກີດ ລ່າສຸດໃນຂະນະ ທີ່ອອກສັນຍາ |
|---|---|---|---|
| 8 | 8 | 8 | 18-50 |
| 10 | 10 | 10 | 18-50 |
| 12 | 12 | 12 | 18-48 |
| 15 | 15 | 15 | 18-45 |

ວົງເງິນປະກັນໄພມູນຄ່າຕໍ່າສຸດທີ່ມີໃຫ້ສໍາລັບລູກຄ້າແມ່ນ 20,000,000ກີບ ສ່ວນວົງເງິນປະກັນໄພສູງສຸດແມ່ນຂຶ້ນກັບການ ພິຈາລະນາເອົາປະກັນໄພທີ່ກໍານົດ.

**ໝາຍເຫດ:**

** ເຫດການທີ່ຖືກຄຸ້ມຄອງ ໝາຍເຖິງ: ການເສຍຊີວິດ ຫຼື ການເສຍອົງຄະແບບສິ້ນເຊີງ ແລະ ຖາວອນ. ກະລຸນາເບິ່ງລາຍລະອຽດເພີ່ມເຕີມໃນຂໍ້ກໍານົດ ແລະ ເງື່ອນໄຂຂອງສັນຍາສໍາລັບຄໍານິຍາມຂອງການເສຍຊີວິດ ຫຼື ການເສຍອົງຄະແບບສິ້ນເຊີງ ແລະ ຖາວອນ ແລະ ຂໍ້ຍົກເວັ້ນຕ່າງໆທັງໝົດ.*

*** ວົງເງິນປະກັນໄພ ແມ່ນຈໍານວນເງິນທີ່ຈະຖືກຈ່າຍໃນກໍລະນີການເສຍຊີວິດ ຫຼື ການເສຍອົງຄະແບບສິ້ນເຊີງ ແລະ ຖາວອນ(ເຫດການທີ່ຖືກຄຸ້ມຄອງ). ກະລຸນາເບິ່ງລາຍລະອຽດເພີ່ມເຕີມໃນຂໍ້ກໍານົດ ແລະ ເງື່ອນໄຂຂອງສັນຍາ.*

*# ຄ່າທໍານຽມປະກັນໄພຊີວິດອາດຈະມີການແກ້ໄຂໃນເງື່ອນໄຂພິເສດ, ຕົວຢ່າງ: ການປ່ຽນແປງຂອງອາຊີບ ແລະ ອື່ນໆ. ກະລຸນາເບິ່ງລາຍລະອຽດເພີ່ມເຕີມໃນຂໍ້ກໍານົດ ແລະ ເງື່ອນໄຂຂອງສັນຍາ.*

PRUDENTIAL
ພຣູເດັນໂຊລ໌ ປະກັນໄພຊີວິດ
ຮັບຟັງ ແລະ ເຂົ້າໃຈທ່ານສະເໝີ



# ພຣູ ອິດູສມາດ

ຊ່ວຍປົກປ້ອງທຶນການສຶກສາ ໃຫ້ລູກຂອງທ່ານໃນອະນາຄົດ.

# PRU EduSmart

Helps you secure your child’s future education fund.